# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 19 ສິງຫາ 2007 (8-19-2007)

---

## ໃນເມື່ອມີຄວາມເຈັບໄຂ້ເກີດຂຶ້ນ

**ຂໍ້ພຣະຄັມພີໃນບົດຮຽນ:** 2 ກະສັດ 5:1-5, 8-16

**ຄຳຖາມຊີວິດ:** ຈະຮູ້ໄດ້ຢ່າງໃດວ່າພຣະເຈົ້າເປັນຫ່ວງໃຍໃນເມື່ອຂ້າພະເຈົ້າມີຄວາມເຈັບໄຂ້?

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າຍິ່ງໃຫຍ່ກວ່າຄວາມເຈັບໄຂ້ ແລະພຣະອົງຊົງເມດຕາສົງສານຕໍ່ຜູ້ທີ່ຖ່ອມໃຈເຊື່ອຟັງພຣະອົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂື້ນມາເພື່ອຊ່ອຍທ່ານສແວງຫາຄວາມຊ່ວຍເຫລືອຈາກພຣະເຈົ້າໃນເມື່ອປະສົບກັບສະພາບການອັນໜັກໜ່ວງ:

- ຍືນຍັນວ່າພຣະເຈົ້າມີພຣະຄຸນພໍສຳລັບຜູ້ຍອມຖ່ອມໃຈລົງເຊື່ອຟັງພຣະອົງ.
- ຫັນເຂົ້າຫາພຣະເຈົ້າໂດຍການໄວ້ວາງໃຈດ້ວຍຄວາມອ່ອນນ້ອມ.

"ເລືອດແດງຂອງທ່ານໄດ້ຖືກທຳລາຍ. ສຂພາບຂອງທ່ານຜິດປົກກະຕິ. ພວກເຮົາບໍ່ຮູ້ຈັກວ່າແມ່ນຫຍັງເປັນຕົ້ນເຫດ, ແລະພວກເຮົາບໍ່ສາມາດຢຸດມັນໄດ້." ນັ້ນເປັນຄຳເວົ້າຂອງທ່ານໝໍ. ຂ້າພະເຈົ້າປ່ວຍຈົນບໍ່ສາມາດຍົກຫົວຂຶ້ນເອງໄດ້. ຜູ້ເປັນໝໍປະຈຳຄອບຄົວໄດ້ກ່າວດັ່ງນັ້ນຈຶ່ງເຮັດໃຫ້ຂ້າພະເຈົ້າຈົມລົງຕ່ຳໄປອີກຊ້ຳ. ຂ້າພະເຈົ້າຄິດຢູ່ໃນໃຈວ່າ ຖ້າຕົນເອງຕາຍ ແມ່ນໃຜຈະເປັນຄົນເບິ່ງແຍງຄອບຄົວແທນ? ດ້ວຍຄວາມສິ້ນຫວັງ ຂ້າພະເຈົ້າໄດ້ອ້ອນວອນອະທິຖານໃຫ້ພຣະເຈົ້າຊົດຊ່ອຍ. ຫລັງຈາກນອນໂຮງພະຍາບານຫລາຍອາທິດ ແລະກັບມາຟັກຟື້ນທີ່ບ້ານເປັນເວລາແປດອາທິດ. ຂ້າພະເຈົ້າກໍຄ່ອຍດີຂຶ້ນແຕ່ລະວັນຈົນສາມາດໄປເຮັດວຽກຕາມປົກກະຕິ. ພຣະເຈົ້າໄດ້ໃຊ້ມະນຸດເປັນຜູ້ຊ່ອຍປົວໃຫ້ດີ ເຊັ່ນ: (ທ່ານໝໍ, ນາງໝໍ, ແລະຢາປົວພະຍາດ). ແຕ່ການດີພະຍາດນັ້ນແມ່ນພຣະເຈົ້າເອງເປັນຜູ້ເຮັດໃຫ້ດີໄດ້.

ພຣະເຈົ້າບໍ່ໄດ້ຊ່ອຍໃຫ້ຄົນເຮົາດີພະຍາດຕລອດເວລາ. ແຕ່ພຣະຄຸນຂອງພຣະອົງມີໄວ້ສຳລັບທຸກໆຄົນ-ຈະເປັນພຣະຄຸນໃຫ້ດີ ຫລືພຣະຄຸນໃຫ້ໝັ້ນຄົງຢູ່ໄດ້. ມະນຸດເຮົາເຈັບປ່ວຍໄຂ້ ບາງເທື່ອເຫັນວ່າການຫາຍດີນັ້ນອາດເປັນໄປບໍ່ໄດ້. ບາງເທື່ອຄົນທີ່ອ່ານບົດຮຽນນີ້ອາດໄດ້ພົບກັບພະຍາດຮ້າຍໃນຊີວິດ. ບາງຄົນອາດເປັນຄົນຊ່ອຍເບິ່ງແຍງຜູ້ໄດ້ຮັບຄວາມເຈັບໄຂ້. ເຫັນວ່າທຸກໆຄົນໄດ້ຮູ້ຈັກບຸກຄົນໃດບຸກຄົນນຶ່ງຜູ້ມີພະຍາດມະເຮັງ ຫລືພະຍາດຮ້າຍຕ່າງໆ. ເຖິງແມ່ນຢູ່ໃນສະພາບດັ່ງກ່າວມານີ້ ໃຫ້ຮູ້ຄັກວ່າພຣະເຈົ້າມີອຳນາດຍິ່ງໃຫຍ່ກວ່າຄວາມເຈັບປວດ ພຣະອົງມີຄວາມເມດຕາສົງສານຢາກຊ່ອຍຜູ້ຍອມຖ່ອມຕົວໄວ້ວາງໃຈໃນພຣະອົງ.

### ສຶກສາພຣະຄັມພີ

### 1. ຄວາມເຈັບໄຂ້ສາມາດເກີດຂຶ້ນກັບທຸກໆຄົນ (2 ກະສັດ 5:1-5)

ຄວາມເຈັບໄຂ້ບໍ່ໄດ້ເລືອກຊັ້ນວັນນະ-ບໍ່ມີຜູ້ໃດສາມາດຫລີກເວັ້ນຈາກມັນໄດ້. ໃຫ້ພິຈາຣະນາເບິ່ງຊີວິດຂອງ **ນາອາມານ**. ລາວເປັນ**ຜູ້ບັງຄັບບັນຊາທະຫານ**ຂອງ ອາຣາມຽນ (ຊີເຣັຽ). ລາວເປັນຜູ້ທີ່ຄົນທັງຫລາຍຖືວ່າເປັນຜູ້ສຳຄັນ, ມີອຳນາດ, ແລະໃຜໆກໍນັບຖື. ນາຍຂອງລາວແມ່ນ**ກະສັດຂອງ ອາຣາມຽນ** ໄດ້ຖືວ່າລາວເປັນ**ຄົນຍິ່ງໃຫຍ່** ແລະ

ເປັນໜ້ານັບຖືເປັນຢ່າງສູງ. ລາວເປັນຄົນມີບຸຄລິກລັກສະນະດີ, ກ້າຫານ, ແລະໄວ້ວາງໃຈໄດ້. ປະວັດສາດໄດ້ບອກວ່າພຣະເຈົ້າໄດ້ເຮັດໃຫ້ທະຫານອາຣາມໄດ້ຮັບ**ໄຊຊະນະ** ຜ່ານທາງເນອາເມດ. ພຣະເຈົ້າໄດ້ໃຊ້ ຄົນທີ່ບໍ່ເຊື່ອໃນພຣະອົງເພື່ອເຮັດໃຫ້ແຜນການຂອງພຣະອົງສຳເຣັດໄດ້.

ນາອາມານ ເປັນນັກຮົບຄົນກ້າຫານ ແຕ່ລາວມີ**ພະຍາດຕາມຜິວໜັງ**ຄືພະຍາດຂີ້ເຮື້ອນ. ສະພາບການຂອງລາວອາດນັບໄດ້ວ່າເປັນພະຍາດຜິວໜັງຢ່າງຮ້າຍແຮງແລະໜ້າລັງກຽດ. ເວລາຂ້າພະເຈົ້າໄດ້ໄປກ່າວປາໄສຢູ່ໂຮງພະຍາບານທີ່ປະເທດອິນເດັຽ, ຂ້າພະເຈົ້າໄດ້ມອງເຫັນຄົນເຈັບທີ່ເປັນພະຍາດຂີ້ເຮື້ອນ ພວກເຂົາໄດ້ຢູ່ຕ່າງຫາກໄດ້ຮັບຄວາມເຈັບປວດແລະບໍ່ມີຄວາມຫວັງ. ເປັນພະຍາດຮ້າຍແຮງຢ່າງອື່ນເຊັ່ນມະເຮັງກໍຍັງບໍ່ໄດ້ໃຫ້ຄົນອື່ນລັງກຽດ. ໃນເມື່ອມີຄວາມຈຳເປັນນັ້ນ ຄົນເຮົາມັກຟັງຄົນອື່ນງ່າຍ ໃຜບອກໃຫ້ເຮັດຫຍັງ, ກິນຢາຫຍັງກໍເຮັດໝົດເພາະຢາກດີ. ສ່ວນເຣື່ອງຂອງນາອາມານນີ້ໄດ້ຖືກຊ່ອຍໃຫ້ດີຈາກ**ຜູ້ຍິງສາວຄົນນຶ່ງ** ຍິງຄົນນີ້ໄດ້ຈັບເອົາມາເປັນຄົນໂທດຈາກ **ອິສຣາເອນ**.

ຍິງສາວຄົນນີ້ເປັນຄົນທີ່ມີຄວາມເຊື່ອໃນພຣະເຈົ້າ. ລາວຄວນເປັນຄົນມີຄວາມຄຽດຢ່າງຂົມຂື່ນເພາະນາງຖືກຈັບເອົາມາເປັນຂ້າທາດຂອງນາອາມານ ແຕ່ແນວໃດກໍຕາມນາງມອບຄວາມຫວັງດ້ວຍຄວາມເຊື່ອໃຫ້ຜູ້ເປັນນາຍ ໂດຍຍອມຮ້ອງນາອາມານວ່າ "**ເຈົ້ານາຍຂອງຂ້ານ້ອຍ.**" ນາງບໍ່ໄດ້ກ່າວຕໍ່ ນາອາມານໂດຍຕົງ ແຕ່ໄດ້ເວົ້າກັບ**ຜູ້ເປັນພັລຍາ**ແລະ**ນາຍຜູ້ຍິງ**ຂອງລາວ. ລາວໄດ້ບອກວ່າມີ**ຜູ້ປະກາດພຣະທັມຂອງພຣະເຈົ້າຢູ່ເມືອງຊາມາເຣັຽ**ສາມາດ**ປົວພະຍາດນີ້ໄດ້**. ເຣື່ອງຂອງຍິງສາວນີ້ໄດ້ເຕືອນພວກເຮົາວ່າ ເຖິງເຮົາຈະເປັນຄົນຕ່ຳຕ້ອຍຫລືມີຕຳແໜ່ງໃດກໍຕາມ ພຣະເຈົ້າສາມາດໃຊ້ເຮົາໄດ້ເພື່ອເຮັດໃຫ້ພຣະປະສົງຂອງພຣະອົງສຳເຣັດ. ພວກເຮົາທຸກໆຄົນຄວນຊອກຫາໂອກາດບອກຄົນອື່ນວ່າພຣະເຈົ້າສາມາດເຮັດໄດ້ທຸກຢ່າງ.

ພຣະຄັມພີບໍ່ໄດ້ກ່າວວ່າ ນາອາມານໄດ້ເອົາຂອງຂວັນໃຫ້ນາງ ຫລືກ່າວຂອບໃຈທີ່ນາງໄດ້ຊ່ອຍເຫລືອ. ນາງຍັງເປັນຄົນບໍ່ມີຊື່ສຽງໃນປະວັດສາດ. ແຕ່ນາອາມານໄດ້ປະຕິບັດຕາມຄຳແນະນຳຂອງນາງ. ນາອາມານ ໄດ້ເຂົ້າໄປຂອບໃຈກະສັດຜູ້ເປັນນາຍ ບອກເຖິງຄຳແນະນຳຂອງຍິງຂ້າທາດຄົນນັ້ນ. ກະສັດອາດຈະຫົວເຍາະເຍີຍຕໍ່ນາຍທະຫານ ຜູ້ເກັ່ງກ້າທີ່ຍອມຟັງຄວາມຍິງຜູ້ເປັນຂ້າທາດ. ແຕ່ຢ່າງໃດກໍຕາມ ລາວຢາກດີພະຍາດ ລາວຍອມເຮັດທຸກສິ່ງຢ່າງ. ເຫັນວ່າກະສັດບໍ່ໄດ້ຫົວຂວັນເພາະນາຍທະຫານຜູ້ເກັ່ງກ້າມີຄຸນຄ່າສຳລັບເພິ່ນໃນກອງທັບ. ທີ່ສຸດກະສັດກໍອະນຸດຍາດໃຫ້ນາຍທະຫານລາພັກເພື່ອຈະໄປເມືອງຊາມາເຣັຽ. ຍິ່ງໄປກ່າວນັ້ນພະອົງຍັງໄດ້**ມອບຈົດໝາຍ**ໃຫ້ເພື່ອຈະໄດ້ເອົາໄປແນະນຳໃຫ້**ກະສັດຂອງອິສເອນ**. ຈົດໝາຍໄດ້ຍັງໄດ້ເຕືອນໃຫ້ກະສັດຂອງພວກເຮັບເຣີເຖິງເຣື່ອງການປົວພະຍາດໃຫ້ດີຂອງນາຍທະຫານຜູ້ເປັນພະຍາດຜິດໜັງ.

ນາອາມານໄດ້ຈັດຕຽມສິ່ງຂອງຢ່າງຫລວງຫລາຍເພື່ອເປັນຂອງຂວັນເພາະລາວຫວັງວ່າຈະດີ. ລາວເອົາ **ເງິນ 750 ປອນ, ຄຳ 150 ປອນ, ແລະເຄື່ອງນຸ່ງ 10 ຊຸດໄປນຳ.** ເຄື່ອງນຸ່ງ 10 ຊຸດນີ້ບໍ່ໄດ້ໝາຍເຖິງວ່າລາວຈະໄປ 10 ວັນ ແຕ່ມັນ ເປັນປະເພນີຂອງລາວທີ່ຈະໃຫ້ຂອງຂວັນຄົນອື່ນເມື່ອດີພະຍາດ. ເໝືອນດັ່ງຄົນໃນທຸກວັນນີ້ ພວກເຮົາອາດເອົາຂອງຂວັນໃຫ້ຄົນອື່ນໆທີ່ປົວພະຍາດຂອງເຮົາດີ ຖ້າດີເທົ່າໃດກໍບໍ່ເສັຽດາຍ. ພະຍາດຮ້າຍນີ້ສາມາດເກີດຂຶ້ນກັບທຸກໆ ຄົນໄດ້.

## ຂ. <u>ວິທີທາງຂອງພຣະເຈົ້າບໍ່ອາດສາມາດເຂົ້າໃຈໝົດ</u> (2 ກະສັດ 5:8-12)

ໃນເມື່ອພຣະເຈົ້າໄດ້ເຂົ້າມາທຳງານກັບຊີວິດຂອງຄົນເຮົາ ພຣະອົງໄດ້ກະທຳຕາມວິທີທາງແລະພຣະປະສົງຂອງພຣະ ອົງ. ຫລາຍໆເທື່ອເຮົາບໍ່ເຂົ້າໃຈເຖິງວິທີທາງຂອງພຣະອົງເພາະພວກເຮົາຕ້ອງການໃຫ້ພຣະອົງກະທຳສິ່ງຕ່າງໆຕາມຢ່າງເຮົາປາຖນາ ແລະຕາມວັນເວລາຂອງເຮົາ. ນາອາມານກໍເໝືອນກັນ ພວກເຮົາລືມຕົວໄປແລ້ວວ່າພວກເຮົາບໍ່ໄດ້ເປັນພຣະເຈົ້າ.

ໃນເມື່ອ ນາອາມານມາເຖິງອິສຣາເອນ ລາວກໍເຂົ້າໄປໃນພຣະຣາຊວັງ ເພື່ອຈະມອບຈົດໝາຍຈາກເຈົ້ານາຍຂອງຕົນເອງຄືກະສັດອາແຣມໃຫ້ແກ່ກະສັດອິສຣາເອນ. ແຕ່ເຈົ້າຊີວິດອິສເອນໄດ້ມີຄວາມຢ້ານກົວເພາະນາຍທະຫານຜູ້ເກັ່ງ

ກ້າມາທີ່ປະຕູເມືອງ. ພຣະອົງຄິດວ່າຈົດໝາຍນັ້ນອາດເປັນຈົດໝາຍຕັ້ງຕີວ່າປົວພະຍາດເພື່ອເຂົ້າມາຍຶດເອົາປະເທດຕາມທີຫລັງ. ດັ່ງນັ້ນ, ພຣະອົງຈຶ່ງ**ຈີກເຄື່ອງທີ່ງ**ດ້ວຍຄວາມໝົດຫວັງ.

ເອລີຊາ ເປັນຄົນຂອງພຣະເຈົ້າ, ເປັນຜູ້ປະກາດພຣະທັມແທນ ອີລີຢາ. ໃນເມື່ອເອລີຊາໄດ້ຍິນສິ່ງທີ່ກະສັດໄດ້ເຮັດນັ້ນ, ລາວໄດ້ບອກຄົນໄປຫາກະສັດວ່າໃຫ້ສົ່ງນາອາມານໄປຫາ ອີລີຊາ. ອີລີຊາບໍ່ໄດ້ຢ້ານຕຳແໜ່ງ ຫລືອິດທິພົນ ນາອາມານ. ແຕ່ຢາກບອກ ນາອາມານວ່າໃນ**ປະເທດອິສຣາເອນຍັງມີຜູ້ປະກາດພຣະທັມ**. ຈຸດປະສົງຂອງພຣະເຈົ້າບໍ່ໄດ້ຂຶ້ນກັບຄວາມຕ້ອງການຂອງມະນຸດທີ່ພຣະອົງຈຳເປັນຕ້ອງເຂົ້າມາຫຍຸ້ງກ່ຽວ. ຜູ້ປະກາດພຣະທັມບໍ່ໄດ້ຢ້ານຫຍັງເລີຍໃນເມື່ອນາຍທະຫານຜູ້ເກັ່ງກ້າເຂົ້າມາທີ່ປະຕູເຮືອນໂດຍຂີ່**ມ້າແລະຣົດມ້າ**. ຜູ້ປະກາດຍັງບໍ່ໄດ້ອອກມາຕ້ອນຮັບແຕ່ໄດ້ສົ່ງ**ຂ້າໃຊ້**ອອກໄປບອກໃຫ້ ນາອາມານໄປ**ອາບນ້ຳ ຫລືລ້າງທີ່ແມ່ນ້ຳຈໍແດນເຈັດເທື່ອ.**

ນາອາມານ ກໍມີປະຕິກິຣິຍາບໍ່ດີໃນເມື່ອໄດ້ຍິນຢ່າງທີ່ຕົນເອງບໍ່ຄິດມາກ່ອນ. ລາວ**ໃຈຮ້າຍ ແລະກໍໜີອອກໄປ**. ຜູ້ປະກາດພຣະທັມກໍໂກດຮ້າຍເພາະບໍ່ໄດ້ຮັບການໃຫ້ກຽດ. ນາອາມານຫວັງວ່າລາວຈະໄດ້ຮັບການປິ່ນປົວຢ່າງມີພິທີແບບພິເສດ. ລາວຄິດວ່າຜູ້ປະກາດພຣະທັມຄວນປົວ**ພະຍາດຜິວໜັງ**ຂອງລາວ ໂດຍການ**ແກວ່ງມືເທິງບາດແຜ**ຂອງລາວ ແລະຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າ. ຄຳບອກໃຫ້ໄປລ້າງທີ່ແມ່ນ້ຳເປັນການປມາດລາວ. ລາວຍັງມີຄຳຖາມວ່າ ເປັນດ້ວຍເຫດໃດລາວຈຶ່ງບໍ່ໄດ້ໄປລ້າງທີ່**ແມ່ນ້ຳດາມາເຊອັນມີຊື່ສຽງດີ** ບາດນີ້ບອກໃຫ້ໄປລ້າງ**ທີ່ແມ່ນ້ຳຂີ້ທູກຂອງພວກອິສຣາເອນ**. ນາອາມນໄດ້ເຮັດຄວາມຜິດເໝືອນດັ່ງພວກເຮົາໄດ້ເຮັດໃນປັດຈຸບັນນີ້. ລາວຕ້ອງການໄດ້ຮັບການປິ່ນປົວພະຍາດໃຫ້ດີຕາມຄວາມນຶກຄິດຂອງຕົນເອງ. ຄວາມຈອງຫອງຂອງລາວບໍ່ໄດ້ເຮັດໃຫ້ພຣະຄຸນຂອງພຣະເຈົ້າມາຕົກໃສ່ລາວ.

ພວກເຮົາອາດຈະບໍ່ເຂົ້າໃຈຫົນທາງຂອງພຣະເຈົ້າ, ແຕ່ການຍອມຖ່ອມຕົວລົງເຊື່ອຟັງ, ພວກເຮົາຈະໄດ້ຮັບພຣະພອນຈາກພຣະອົງ. ຈຳໄວ້ວ່າ ຫົນທາງຂອງພຣະເຈົ້ານັ້ນດີເລີດຕລອດໄປ ແລະຢ່າພາກັນປ່ຽນວິທີທາງຂອງພຣະເຈົ້າໃຫ້ຖືກໃຈເຮົາ. ພວກເຮົາຕ້ອງເຂົ້າມາຫາພຣະເຈົ້າດ້ວຍການຖ່ອມໃຈລົງທີ່ສຸດ.

## 3. <u>ພຣະຄຸນຂອງພຣະເຈົ້າມີສຳລັບເຮົາ</u> (2 ກະສັດ 5:13-16)

ນາອາມານ ເປັນຄົນໂຊກດີທີ່ມີ**ຄົນໃຊ້**ເກັ່ງກ້າ ທີ່ສາມາດຊັກຊວນລາວໃຫ້ພິຈາຣະນາເບິ່ງໃນການປະພຶດຂອງລາວ. ຄົນໃຊ້ໄດ້ນັບຖືນາອາມານເປັນເໝືອນ**ພໍ່**ຄົນນຶ່ງ. ພວກຄົນໃຊ້ນີ້ໄດ້ເປັນຫ່ວງໃຍຕໍ່ລາວ ແລະລາວກໍໄວ້ວາງໃຈໃນພວກເຂົາ. ພວກຄົນໃຊ້ໄດ້ເຕືອນບອກໃຫ້ລາວມີຄວາມຍິນດີ**ຈະເຮັດສິ່ງໃຫຍ່**ເພື່ອຈະໄດ້ຮັບການປົວພະຍາດໃຫ້ດີ. ລາວຢາກ ເຮັດອັນໃດອັນນຶ່ງເພື່ອຈະໄດ້ຮັບການປົວພະຍາດ ແທນທີ່ຈະເຊື່ອຟັງແບບງ່າຍໆຕໍ່ພຣະເຈົ້າ. ແຕ່ນາອາມານ ຍອມຟັງຄວາມແນະນຳຂອງຄົນໃຊ້. **ລາວໄດ້ລົງໄປ** ແລະ**ຈຸ່ມຕົວລົງໃນແມ່ນ້ຳຈໍແດນເຈັດເທື່ອ**. ໃນທັນໃດນັ້ນນາອາມານໄດ້ດີພະຍາດຜິວໜັງ. **ໜັງຂອງລາວກາຍເປັນເໝືອນເດີມ** ແລະປົ່ງຂຶ້ນມາໃໝ່. ແມ່ນ້ຳຈໍແດນບໍ່ໄດ້ມີຣິດອຳນາດອັນໃດເລີຍ, ແຕ່ຄວາມສຳຄັນແລ້ວແມ່ນຄວາມ**ເຊື່ອຟັງຄຳສັ່ງຂອງພຣະເຈົ້າ**. ໃນເມື່ອພວກເຮົາເຊື່ອຟັງຄຳສັ່ງຂອງພຣະເຈົ້າ ພວກເຮົາກໍສະແດງເຖິງຄວາມເຊື່ອໃນພຣະອົງ.

ຜູ້ເປັນພະຍາດຂີ້ເຮື້ອນ ຫລືພະຍາດຜິວໜັງ ໃນເມື່ອໄດ້ຮັບການປົວໃຫ້ດີແລ້ວ ພວກເຂົາກໍພົບກັບຄວາມຊົມຊື່ນຍິນດີອັນໃຫຍ່ທີ່ສຸດໃນຊີວິດ. ນາອາມານເຂົ້າໃຈວ່າອັສຈັນນັ້ນບໍ່ໄດ້ມາຈາກມະນຸດ ແຕ່ແມ່ນພຣະຜູ້ເປັນເຈົ້າຊົງກະທຳ. ດັ່ງນັ້ນ, ນາອາມານໄດ້ປະກາດວ່າ**ບໍ່ມີພຣະເຈົ້າອົງອື່ນນອກຈາກພຣະເຈົ້າຂອງອິສຣາເອນ**. ການດີພະຍາດຂອງລາວນຳໄປເຖິງຄວາມເຊື່ອໃນພຣະເຈົ້າອົງທ່ຽງແທ້. ໃນເມື່ອພຣະເຈົ້າມີຄວາມເມດຕາຕໍ່ຄວາມຕ້ອງການດ້ານຮ່າງກາຍ, ພຣະ ຄຸນຂອງພຣະອົງໄດ້ຫຸ້ມຫໍ່ຄວາມຕ້ອງການດ້ານຈິດວິນຍານ.

ນາອາມານບໍ່ໄດ້ຮັບເອົາດ້ວຍຄວາມເຊື່ອເທົ່ານັ້ນ ແຕ່ລາວຕອບສນອງດ້ວຍການຮູ້ພຣະຄຸນຢ່າງຫລວງຫລາຍ. ລາວໄດ້ມອບຂອງຂວັນທີ່ລາວໄດ້ເອົາມານັ້ນໃຫ້ແກ່ຜູ້ປະກາດພຣະທັມ, ແຕ່ຜູ້ປະກາດພຣະທັມປະຕິເສດບໍ່ຍອມຮັບເພາະເປັນການຖືກເກີນໄປທີ່ແລກເອົາພຣະຄຸນຂອງພຣະເຈົ້າໂດຍເງິນແລະຄຳ. ນາອາມານກໍຕອບສນອງດ້ວຍ

ຄວາມຢຳເກງແລະຖ່ອມຕົວ. ນາອາມານເປັນນາຍທະຫານ ແຕ່ຫລັງຈາກໄດ້ດີພະຍາດແລ້ວລາວໄດ້ເອີ້ນຕົວເອງວ່າເປັນຂ້າທາດຂອງອີລີຊາ. ຖ້າພວກເຮົາຕ້ອງການປະສົບກັບພຣະຄຸນຂອງພຣະເຈົ້າແລ້ວພວກເຮົາຕ້ອງເຂົ້າໄປຫາພຣະອົງໂດຍຄວາມຖ່ອມຕົວ ແລະດ້ວຍຄວາມເຊື່ອ.

ພຣະຄຸນຂອງພຣະເຈົ້າມີສຳລັບທຸກຄົນທີ່ຍອມຖ່ອມຕົວໄວ້ວາງໃຈໃນພຣະອົງ. ຄຳສັນຍາອັນນີ້ ບໍ່ໄດ້ໝາຍຄວາມວ່າພຣະເຈົ້າຈະຊ່ອຍປົວພະຍາດຕ່າງໆທີ່ພວກເຮົາໄດ້ຮັບຢ່າງອັດຕະໂນມັດ. ແຕ່ພວກເຮົາສາມາດເພິ່ງພຣະຄຸນການປິ່ນປົວ, ພຣະຄຸນໃນຄວາມເຊື່ອ, ແລະພຣະຄຸນໃຫ້ມີກຳລັງທົນຢູ່ໄດ້.

**ບົດຮຽນຊີວິດ**

ປະວັດຂອງ ນາອາມານໄດ້ສອນເຮົາວ່າ ພຣະເຈົ້າເປັນອົງຍິ່ງໃຫຍ່ກວ່າຄວາມເຈັບປວດຂອງພວກເຮົາ ແລະພຣະອົງມີຄວາມເມດຕາທີ່ຈະຊ່ອຍຜູ້ຍອມຖ່ອມຕົວໄວ້ໃຈໃນພຣະອົງ.

ຫລັກຄວາມເຊື່ອໃນເຣື່ອງຂອງນາອາມານນີ້ສາມາດເຮັດໃຫ້ເຮົາມີກຳລັງໃນຄວາມເຊື່ອທີ່ຈະມີຄວາມສຳພັນກັບອົງພຣະຜູ້ເປັນເຈົ້າ.

- ໃຫ້ເຂົ້າໃຈວ່າບໍ່ມີຈັກຄົນໄດ້ພົ້ນຈາກບັນຫາ, ໂດຍສະເພາະຄວາມເຈັບໄຂ້ໄດ້ພະຍາດ.
- ເຖິງແມ່ນທ່ານຍັງບໍ່ທັນເຂົ້າໃຈເຖິງໜົນທາງຂອງພຣະເຈົ້າ, ທ່ານກໍຍັງສາມາດໄວ້ວາງໃຈໃນຄວາມຮັກຂອງພຣະອົງ.
- ພຣະຄຸນຂອງພຣະເຈົ້າບໍ່ແມ່ນເຣື່ອງຄວາມສລາດແລະເຂົ້າໃຈ ແຕ່ແມ່ນການຖ່ອມໃຈຍອມຮັບດ້ວຍຄວາມເຊື່ອ.
- ພຣະຄຸນຂອງພຣະເຈົ້າບໍ່ໄດ້ເຂົ້າມາຫາໃນທາງທີ່ເຮົາຄິດໄວ້, ແຕ່ເຂົ້າມາຕາມທີ່ພວກເຮົາມີຄວາມຕ້ອງປະສົງ.

ຈຳໄວ້ວ່າພຣະຄຸນຂອງພຣະເຈົ້າມີພຽງພໍ, ເວລາເຮົາມີຄວາມເຈັບໄຂ້, ແລະມີສຳລັບທຸກໆຄົນທີ່ຍອມຖ່ອມຕົວໄວ້ວາງໃຈໃນພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.